**ພະແນກພັດທະນາການບໍລິການ**
1215 O Street, MS 9-90
Sacramento, CA 95814
TTY: 711
(833) 421-0061

ວັນທີ 30 ທັນວາ 2022

ເຖິງ: ບັນດາຜູ້ອຳນວຍການສູນພາກພື້ນ

ເລື່ອງ: ໂຄງການກຳນົດຕົນເອງ - ສືບຕໍ່ແຜນງົບປະມານ ແລະແຜນການໃຊ້ຈ່າຍສ່ວນບຸກຄົນ

ເພື່ອໃຫ້ສອດຄ່ອງກັບຫຼັກການພື້ນຖານຂອງໂຄງການກຳນົດຕົນເອງ (Self-Determination Program, SDP), ຜູ້ເຂົ້າຮ່ວມມີອຳນາດໃນການຄວບຄຸມຈຳນວນເງິນໃດໜຶ່ງທີ່ແນ່ນອນເພື່ອທີ່ຈະຊື້ສິນຄ້າ ແລະ ການບໍລິການທີ່ຈຳເປັນໂດຍຜ່ານງົບປະມານສ່ວນບຸກຄົນຂອງເຂົາເຈົ້າ. ທີມງານວາງແຜນສ່ວນບຸກຄົນມີຄວາມຮັບຜິດຊອບຮ່ວມກັນໃນການຮ່ວມມືພັດທະນາ ແລະ ອະນຸມັດງົບປະມານສ່ວນບຸກຄົນ ແລະ ທົບທວນແຜນການໃຊ້ຈ່າຍສຳລັບປີຕໍ່ໄປກ່ອນທີ່ຈະສິ້ນສຸດປີງົບປະມານໃນປະຈຸບັນຂອງຜູ້ເຂົ້າຮ່ວມ. ໃນລະຫວ່າງຂະບວນການນີ້ອາດຈະມີຄວາມຂັດແຍ້ງກ່ຽວກັບງົບປະມານ ແລະ/ຫຼື ການບໍລິການ. ຈົດໝາຍສະບັບນີ້ໃຫ້ຄຳແນະນຳແກ່ສູນພາກພື້ນເພື່ອຮັບປະກັນໃຫ້ຜູ້ເຂົ້າຮ່ວມສືບຕໍ່ເຂົ້າເຖິງສິນຄ້າ ແລະ ການບໍລິການທີ່ຈຳເປັນເພື່ອຈັດຕັ້ງປະຕິບັດແຜນງານສ່ວນບຸກຄົນ (individual program plan, IPP) ຂອງເຂົາເຈົ້າ.

ຄ້າຍຄືກັນກັບວ່າແຕ່ລະຄົນໄດ້ຮັບການບໍລິການຜ່ານລະບົບແບບດັ້ງເດີມ, ສູນພາກພື້ນມີຄວາມຮັບຜິດຊອບເພື່ອຮັບປະກັນຄວາມຕໍ່ເນື່ອງຂອງການບໍລິການທີ່ຈຳເປັນເພື່ອປະຕິບັດ IPP ຂອງຜູ້ເຂົ້າຮ່ວມ SDP. ໃນ SDP, ນີ້ລວມມີໄລຍະເວລາທີ່ຜູ້ເຂົ້າຮ່ວມລົງທະບຽນບໍ່ມີງົບປະມານທີ່ໄດ້ຮັບການຢັ້ງຢືນ ແລະ/ຫຼື ແຜນການໃຊ້ຈ່າຍປະຈຸບັນ. ການລໍຖ້າສຳເລັດແຜນງົບປະມານ ແລະ ແຜນລາຍຈ່າຍໃໝ່, ສູນປະຈຳພາກພື້ນຈະສືບຕໍ່ໃຫ້ບໍລິການໂດຍຜ່ານຂະບວນການໃດນຶ່ງທີ່ບັນລຸຜົນໄດ້ຮັບນີ້, ລວມມີ:

- ຖ້າຜູ້ເຂົ້າຮ່ວມ SDP ຍັງບໍ່ໝົດເງິນງົບປະມານສ່ວນບຸກຄົນທີ່ຈຳເປັນເພື່ອສືບຕໍ່ຈັດຕັ້ງປະຕິບັດ IPP ຂອງເຂົາເຈົ້າ, ໃຫ້ຕໍ່ເວລາວັນສິ້ນສຸດຂອງງົບປະມານ ແລະ ແຜນລາຍຈ່າຍປັດຈຸບັນ.
- ການສືບຕໍ່ແຜນງົບປະມານ ແລະ ການໃຊ້ຈ່າຍຈາກປີຜ່ານມາ ເປັນການອະນຸຍາດຊື້-ຂາຍບໍລິການໃໝ່, ລົບອອກທຸກລາຍຈ່າຍຄັ້ງດຽວ.

ສູນປະຈຳພາກພື້ນຕ້ອງແຈ້ງໃຫ້ຜູ້ໃຫ້ບໍລິການດ້ານການຄຸ້ມຄອງການເງິນ ກ່ຽວກັບການຂະຫຍາຍງົບປະມານ ແລະ ແຜນລາຍຈ່າຍສ່ວນບຸກຄົນ ລໍຖ້າການສຳເລັດແຜນງົບປະມານ ແລະ ແຜນລາຍຈ່າຍຢ່າງໜ້ອຍ 14 ວັນກ່ອນສິ້ນສຸດທ້າຍປີງົບປະມານປັດຈຸບັນ. ແຜນງົບປະມານ ແລະ ການໃຊ້ຈ່າຍໃໝ່ຈະໃຫ້ສຳເລັດບໍ່ເກີນ 60 ວັນ ນັບແຕ່ວັນສິ້ນສຸດຂອງປີງົບປະມານທີ່ຜ່ານມາ ຫຼື ຈະອອກແຈ້ງການເພື່ອດຳເນີນງານ. ແຈ້ງການເພື່ອດຳເນີນງານອາດຈະໄດ້ແຈ້ງອອກໃນເວລາອື່ນທີ່ບໍ່ມີການຍິນຍອມເຫັນດີຮ່ວມກັນກັບການຕັດສິນໃຈໃດໜຶ່ງ. ຜູ້ເຂົ້າຮ່ວມທີ່ຍື່ນອຸທອນຕາມເວລາຈະສືບຕໍ່ມີການເຂົ້າເຖິງງົບປະມານສ່ວນບຸກຄົນຕາມການຕົກລົງກັນຄັ້ງສຸດທ້າຍ, ລົບລາຍຈ່າຍຄັ້ງດຽວໃນລະຫວ່າງຂັ້ນຕອນການອຸທອນ. ວັນທີເລີ່ມຕົ້ນຂອງວົງຈອນງົບປະມານໃຫມ່ຈະໄດ້ຮັບການຕົກລົງເຫັນດີ ໂດຍທີມງານວາງແຜນສ່ວນບຸກຄົນ.

ຜູ້ບໍລິໂພກ, ສະມາຊິກໃນຄອບຄົວ ຫຼື ຜູ້ໃຫ້ບໍລິການຄວນຕິດຕໍ່ກັບສູນພາກພື້ນທ້ອງຖິ່ນຂອງເຂົາເຈົ້າກໍລະນີມີຄຳຖາມກ່ຽວກັບຈົດໝາຍສະບັບນີ້.

ດ້ວຍຄວາມເຄົາລົບ,

ປອ. VICKI L. SMITH
ຮອງຜູ້ອຳນວຍການ
ຂະແໜງການພັດທະນານະໂຍບາຍ ແລະ ແຜນງານ

ສຳເນົາເຖິງ:ບັນດາຜູ້ບໍລິຫານໃນສູນພາກພື້ນ
ບັນດາຜູ້ອຳນວຍການສູນພາກພື້ນຂອງການບໍລິການຜູ້ບໍລິໂພກ
ບັນດາຜູ້ອຳນວຍການຝ່າຍບໍລິການຊຸມຊົນຂອງສູນປພາກພື້ນ
ບັນດາສະມາຄົມໜ່ວຍງານຂອງສູນປະຈຳເຂດ
ສະພາແຫ່ງລັດວ່າດ້ວຍຄວາມພິການດ້ານພັດທະນາການ
Nancy Bargmann, ພະແນກພັດທະນາການບໍລິການ
Brian Winfield, ພະແນກບໍລິດ້ານການພັດທະນາ
Carla Castañeda, ພະແນກບໍລິການພັດທະນາ
Jim Knight, ພະແນກບໍລິການດ້ານການພັດທະນາ
Ernie Cruz, ພະແນກບໍລິການດ້ານການພັດທະນາ
Suzy Requarth, ພະແນກບໍລິການດ້ານການພັດທະນາ